1189
9/7/19

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1293 / ຫອຄ. ກຫຄວ

ນະຄອນຫລວງວຽງຈັນ, ວັນທີ 27 ມິຖຸນາ 2019

## ແຈ້ງການ

ເຖິງ: ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ

ເລື່ອງ: ການສ້າງຕັ້ງສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າ ຂອງວິສາຫະກິດ

- ອີງຕາມ ມາດຕາ 40 ຂອງກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ປີ 2013;
- ອີງຕາມບົດແນະນຳສະບັບເລກທີ 1641/ອຄ.ທຄວ,ລົງວັນທີ 11 ກັນຍາ 2014 ວ່າດ້ວຍການສ້າງຕັ້ງສາຂາວິສາຫະກິດ ( ນິຕິບຸກຄົນ) ຢູ່ ສປປ ລາວ;
- ອີງຕາມມາດຕາ 16 ແລະ ມາດຕາ 17ຂອງ ຂໍ້ຕົກລົງສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ.

ເພື່ອໃຫ້ການສ້າງຕັ້ງສາຂາ ຂອງວິສາຫະກິດ (ນິຕິບຸກຄົນ) ແລະ ການສ້າງຕັ້ງຮ້ານຈຳໜ່າຍຜະລິດຕະພັນຂອງໂຮງງານ ຫລື ຮ້ານຈຳໜ່າຍສິນຄ້າຂອງວິສາຫະກິດ ນຳເຂົ້າສິນຄ້າ ສອດຄ່ອງກັບລະບຽບກົດໝາຍ, ຫລີກລ້ຽງການສວຍໃຊ້ ແອບອ້າງຮູບແບບທຸລະກິດ ຫລືການຈຳໜ່າຍສິນຄ້າຕ່າງໆ ເປັນສາຂາ ຫລື ເປັນຮ້ານຈຳໜ່າຍສິນຄ້າ ຂອງວິສາຫະກິດໃດໜຶ່ງ, ຫ້ອງການ ກະຊວງອຸດສາຫະກຳ ແລະການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

**ກ. ສາຂາ ວິສາຫະກິດ (ນິຕິບຸກຄົນ)**

1. ການສ້າງຕັ້ງ ສາຂາ (ນິຕິບຸກຄົນ) ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມບົດບັນຍັດມາດຕາ 40 ກົດໝາຍວ່າດ້ວຍວິສາຫະກິດ - 2013 ແລະ ບົດແນະນຳ, ສະບັບເລກທີ 1641/ອຄ.ທຄວ, ລົງວັນທີ 11 ກັນຍາ 2014 ວ່າດ້ວຍການສ້າງຕັ້ງສາຂາ ວິສາຫະກິດ (ນິຕິບຸກຄົນ) ຢູ່ ສປປ ລາວ.

ສາຂາ ວິສາຫະກິດ (ນິຕິບຸກຄົນ) ໝາຍເຖິງ ສາຂາ ຂອງວິສາຫະກິດຮຸ້ນສ່ວນ ຫລື ບໍລິສັດ.

2. ສາຂາ ວິສາຫະກິດ (ນິຕິບຸກຄົນ) ແມ່ນສ່ວນໜຶ່ງໃນໂຄງປະກອບ ຂອງວິສາຫະກິດແມ່ ຫລື ເວົ້າອີກຢ່າງໜຶ່ງ ສາຂາ ແມ່ນຕົວແທນຂອງວິສາຫະກິດແມ່ ໃນການເຮັດໜ້າທີ່ບໍລິການຈັດການງານ ຊ່ວຍ ແລະ ໃນນາມວິສາຫະກິດແມ່ ໃນພື້ນທີ່ ທີ່ໄດ້ຮັບມອບໝາຍໃດໜຶ່ງ.



Scanned with CamScanner

ພື້ນທີ່ ທີ່ໄດ້ຮັບມອບໝາຍໃດໜຶ່ງ ແມ່ນພື້ນທີ່ ທີ່ສາຂາສາມາດສ້າງຕັ້ງຂຶ້ນໄດ້ ສຳລັບເງື່ອນໄຂ ຂອງປະເທດເຮົາ ໝາຍເຖິງແຂວງຕ່າງໆ ໃນນີ້ແຂວງໜຶ່ງຕ້ອງມີໜຶ່ງ ສາຂາເທົ່ານັ້ນ, ຫາກມີຄວາມຈຳເປັນມີຫລາຍກວ່າໜຶ່ງສາຂາ ຕ້ອງແຈ້ງເຫດຜົນຄວາມຈຳເປັນ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ຂຶ້ນທະບຽນວິສາຫະກິດໃຫ້ວິສາຫະກິດແມ່ເພື່ອພິຈາລະນາ ກ່ອນລະບຸລົງດ້ານຫລັງໃບທະບຽນວິສາຫະກິດ.

ການສວຍໃຊ້ ແອບອ້າງສາຂາ ເພື່ອເຮັດທຸລະກິດຮູບແບບອື່ນ ວິສາຫະກິດແມ່ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍທັງໝົດ, ອັນໃດເປັນຮ້ານຈຳໜ່າຍຜະລິດຕະພັນ ຂອງໂຮງງານ ຫລື ສິນຄ້ານຳເຂົ້າ ຂອງວິສາຫະກິດ ກໍຕ້ອງສ້າງເປັນຮ້ານຈຳໜ່າຍດັ່ງກ່າວໃຫ້ຖືກຕ້ອງ ຕາມແຈ້ງການສະບັບນີ້ ຫລື ອັນໃດ (ຕົວຢ່າງ) ເປັນຮ້ານຕົວແທນຈຳໜ່າຍ ກໍຕ້ອງຂຶ້ນທະບຽນວິສາຫະກິດຂາຍຍ່ອຍ ໃຫ້ຖືກຕ້ອງຕາມຂໍ້ຕົກລົງຂ້າງເທິງ ບໍ່ຄວນແອບອ້າງຊື່ສາຂາອີກ.

ການບໍລິຫານຈັດການວຽກງານ ຂອງສາຂາ ແມ່ນການດູແລ ຄຸ້ມຄອງບໍລິຫານວຽກງານ ຊ່ວຍວິສາຫະກິດແມ່ ໃນພື້ນທີ່ ທີ່ໄດ້ຮັບມອບໝາຍ ເຊັ່ນ: ການຄຸ້ມຄອງດູແລທຸລະກິດຂອງວິສາຫະກິດແມ່, ການເຮັດບັນຊີຍ່ອຍທີ່ຕິດພັນກັບທຸລະກິດຕ່າງໆດັ່ງກ່າວ, ການເບີກຈ່າຍເງິນເດືອນ, ການຈັດຊື້, ຈັດຈ້າງ, ການເຈລະຈາທຸລະກິດ ໃນນາມວິສາຫະກິດແມ່ (ຖ້າໄດ້ຮັບມອບໝາຍ), ດ້ວຍເຫດນີ້ ກົດໝາຍຈຶ່ງອະນຸຍາດໃຫ້ສາຂາມີຕາປະທັບ ເພື່ອໃຊ້ໃນການເຄື່ອນໄຫວວຽກງານ ຊ່ວຍ ແລະ ໃນນາມວິສາຫະກິດແມ່;

3. ໃນແຂວງໜຶ່ງໆ ຫາກວິສາຫະກິດແມ່ ບໍ່ມີທຸລະກິດຫລາຍພຽງພໍ ສຳລັບການສ້າງຕັ້ງສາຂາ ເພື່ອເຮັດໜ້າທີ່ບໍລິຫານຈັດການແທນ ແມ່ນເປັນການສິ້ນເປືອງ ໂດຍບໍ່ມີປະໂຫຍດ. ການມີສາຂາ ໃນແຕ່ລະແຂວງນັ້ນ ຈຶ່ງຂຶ້ນຢູ່ກັບຈຳນວນທຸລະກິດ ແລະ ການພິຈາລະນາຂອງວິສາຫະກິດແມ່.

ທຸລະກິດຕ່າງໆ ຂອງວິສາຫະກິດແມ່ ທີ່ເຄື່ອນໄຫວ ໃນແຕ່ລະແຂວງນັ້ນ ຕ້ອງປະຕິບັດໃຫ້ສອດຄ່ອງກັບລະບຽບກົດໝາຍ.

4. ການສ້າງຕັ້ງສາຂາໃດໜຶ່ງ ຕ້ອງໄດ້ຮັບການລະບຸສາຂາດັ່ງກ່າວ ລົງດ້ານຫລັງໃບທະບຽນວິສາຫະກິດຈາກເຈົ້າໜ້າທີ່ທະບຽນວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດໃຫ້ ວິສາຫະກິດແມ່ ຊຶ່ງຕ້ອງປະກອບສຳນວນເອກະສານໃຫ້ຖືກຕ້ອງ ຄົບຖ້ວນ ດັ່ງລຸ່ມນີ້ :

- ສຳເນົາໃບທະບຽນວິສາຫະກິດ ;
- ສຳເນົາໃບອະນຸຍາດລົງທຶນແລະ/ຫລື ໃບອະນຸຍາດດຳເນີນທຸລະກິດຂອງວິສາຫະກິດແມ່ ຈາກຂະແໜງການກ່ຽວຂ້ອງ ໃນກໍລະນີ ເປັນກິດຈະການຄວບຄຸມ ຫລື ກິດຈະການທີ່ຕ້ອງຂໍອະນຸຍາດ;
- ໃບມອບສິດ, ຂອບເຂດຄວາມຮັບຜິດຊອບ ລວມທັງທຶນ ( ທຶນຄົງທີ່ ແລະ ທຶນໝູນວຽນ ), ທີ່ວິສາຫະກິດແມ່ມອບໃຫ້ສາຂາ ເຊັນໂດຍຜູ້ອຳນວຍການ ຫຼື ຜູ້ຈັດການຂອງວິສາຫະກິດແມ່;
- ບັນຊີຈຳນວນລາຍຊື່ຄະນະສາຂາ, ພະນັກງານຂອງສາຂາ ເຊັນໂດຍຜູ້ອຳນວຍການ ຫຼື ຜູ້ຈັດການຂອງວິສາຫະກິດແມ່, ໃນນີ້ໃຫ້ລະບຸຊື່ ແລະ ນາມສະກຸນໃຫ້ລະອຽດ;
- ໃບຢັ້ງຢືນການລົງທະບຽນປະກັນສັງຄົມຂອງຫົວໜ້າ ແລະ ພະນັກງານສາຂາແຕ່ລະຄົນ;
- ສັນຍາເຊົ່າສະຖານທີ່ ສຳນັກງານຂອງສາຂາ ເຊັນໂດຍວິສາຫະກິດແມ່ (ກໍລະນີເຊົ່າ);



Scanned with CamScanner

5. ພາຍຫລັງໄດ້ຮັບການລະບຸສາຂາໃສ່ດ້ານຫລັງໃບທະບຽນວິສາຫະກິດແລ້ວ ກ່ອນຈະເຄື່ອນໄຫວວຽກງານບໍລິຫານຈັດການ ຊ່ວຍ ແລະໃນນາມວິສາຫະກິດແມ່ ຕາມການມອບໝາຍ ຕ້ອງໄດ້ນໍາເອົາເອກະສານທັງໝົດດັ່ງທີ່ກ່າວມາໃນຂໍ້ 4 ເທິງນີ້ ໄປຍື່ນຂໍໃບຢັ້ງຢືນການລົງທະບຽນສ້າງຕັ້ງສາຂາ ນໍາພະແນກອຸດສາຫະກໍາ ແລະ ການຄ້າຂັ້ນແຂວງ ບ່ອນທີ່ສໍານັກງານ ຂອງສາຂາຕັ້ງນັ້ນຢູ່.

ກໍລະນີລະເມີດ ຕາມທີ່ກ່າວມາໃນວັກໜຶ່ງເທິງນີ້ ໃຫ້ຖືວ່າ ສາຂາດັ່ງກ່າວ ເຄື່ອນໄຫວ ໂດຍບໍ່ໄດ້ຮັບການອະນຸຍາດຖືກຕ້ອງ ແລະ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ.

**ຂ. ການສ້າງຕັ້ງຮ້ານຈໍາໜ່າຍສິນຄ້າຜະລິດຕະພັນໂຮງງານ ຫລື ສິນຄ້ານໍາເຂົ້າ ຂອງວິສາຫະກິດ**

1. ໂຮງງານ ທີ່ຜະລິດ ຜະລິດຕະພັນໃດ ຫລື ວິສາຫະກິດ ທີ່ນໍາເຂົ້າສິນຄ້າໃດ ສາມາດຈໍາໜ່າຍຜະລິດຕະພັນທີ່ຕົນຜະລິດ ຫລື ສິນຄ້າທີ່ຕົນນໍາເຂົ້າ ໂດຍບໍ່ຈໍາເປັນ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຫລື ຂໍອະນຸຍາດດໍາເນີນທຸລະກິດ ຕ່າງຫາກ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ແລະ ມາດຕາ 17 ຂອງຂໍ້ຕົກລົງ, ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, ແຕ່ຕ້ອງສ້າງຕັ້ງຮ້ານຈໍາໜ່າຍດັ່ງກ່າວໃຫ້ຖືກຕ້ອງ ຄົບຖ້ວນ ຕາມຂັ້ນຕອນ ແລະ ເງື່ອນໄຂທີ່ບົ່ງໄວ້ໃນ ຂໍ້ 2 ແລະ 3 (ຂໍ) ຂອງແຈ້ງການສະບັບນີ້.

2. ການສ້າງຕັ້ງຮ້ານຈໍາໜ່າຍຜະລິດຕະພັນໂຮງງານ ຫລື ສິນຄ້ານໍາເຂົ້າ ແມ່ນ ຕ້ອງໄດ້ຮັບໃບຢັ້ງຢືນການລົງທະບຽນສ້າງຕັ້ງຮ້ານຈໍາໜ່າຍ ຈາກພະແນກອຸດສາຫະກໍາ ແລະ ການຄ້າຂັ້ນແຂວງ ບ່ອນທີ່ຮ້ານຈໍາໜ່າຍນັ້ນຕັ້ງຢູ່ກ່ອນ, ຊຶ່ງຕ້ອງປະກອບສໍານວນເອກະສານໃຫ້ຖືກຕ້ອງ ຄົບຖ້ວນ ດັ່ງລຸ່ມນີ້:

- ຄໍາຮ້ອງຂໍໃບຢັ້ງຢືນການລົງທະບຽນສ້າງຕັ້ງຮ້ານຈໍາໜ່າຍ (ແບບພິມຄໍາຮ້ອງ ແລະ ໃບຢັ້ງຢືນການລົງທະບຽນສ້າງຕັ້ງຮ້ານຈໍາໜ່າຍ ຄັດຕິດມາພ້ອມນີ້)
- ສໍາເນົາໃບທະບຽນວິສາຫະກິດ ;
- ສໍາເນົາໃບອະນຸຍາດລົງທຶນ ແລະ/ຫລື ໃບອະນຸຍາດດໍາເນີນທຸລະກິດຂອງວິສາຫະກິດ ຈາກຂະແໜງການກ່ຽວຂ້ອງ ໃນກໍລະນີ ເປັນກິດຈະການຄວບຄຸມ ຫລື ກິດຈະການທີ່ຕ້ອງຂໍອະນຸຍາດ;
- ບັນຊີຈໍານວນລາຍຊື່ພະນັກງານຂອງຮ້ານຈໍາໜ່າຍ ເຊັນໂດຍຜູ້ອໍານວຍການ ຫຼື ຜູ້ຈັດການຂອງວິສາຫະກິດ, ໃນນີ້ໃຫ້ລະບຸຊື່ ແລະ ນາມສະກຸນໃຫ້ລະອຽດ;
- ໃບຢັ້ງຢືນການລົງທະບຽນປະກັນສັງຄົມພະນັກງານ ຂອງຮ້ານຈໍາໜ່າຍແຕ່ລະຄົນ;
- ສັນຍາເຊົ່າຮ້ານຈໍາໜ່າຍ ເຊັນໂດຍວິສາຫະກິດ (ກໍລະນີເຊົ່າ).

ຫ້າມເດັດຂາດ ບໍ່ໃຫ້ລະບຸຮ້ານຈໍາໜ່າຍດັ່ງກ່າວ ລົງດ້ານຫລັງໃບທະບຽນວິສາຫະກິດ.

ສໍາລັບຜູ້ຂາຍສິນຄ້າ ທີ່ເປັນຄົນຕ່າງປະເທດພາຍໃນຮ້ານຈໍາໜ່າຍ ຕ້ອງປະຕິບັດສອດຄ່ອງກັບອາຊີບສະຫງວນ ສໍາລັບພົນລະເມືອງລາວ ຫລື ສອດຄ່ອງກັບອັດຕາສ່ວນ ຕາມທີ່ກໍານົດໄວ້ໃນ ລະບຽບກົດໝາຍກ່ຽວກັບແຮງງານ ໃນ ສປປ ລາວ.



Scanned with CamScanner

3. ພາຍຫລັງ ທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ໄດ້ອອກໃບຢັ້ງຢືນການລົງທະບຽນສ້າງຕັ້ງຮ້ານຈຳໜ່າຍ ໃຫ້ໂຮງງານ ຫລື ວິສາຫະກິດນຳເຂົ້າສິນຄ້າແລ້ວ ຕ້ອງແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ບ່ອນທີ່ຮ້ານຈຳໜ່າຍນັ້ນ ຕັ້ງຢູ່ ເພື່ອຊາບ ແລະ ຄຸ້ມຄອງຕາມພາລະບົດບາດ.

ໃບຢັ້ງຢືນການລົງທະບຽນສ້າງຕັ້ງຮ້ານຈຳໜ່າຍດັ່ງກ່າວ ຍັງເປັນບ່ອນອີງໃຫ້ພາກສ່ວນສວ່ຍສາອາກອນ ໃນການຄຸ້ມຄອງການປະຕິບັດພັນທະ ຕາມລະບຽບກົດໝາຍ.

ຄ. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ກວດກາຄືນການສ້າງຕັ້ງສາຂາ, ຮ້ານຈຳໜ່າຍຜະລິດຕະພັນ ສິນຄ້າ ທີ່ບໍ່ສອດຄ່ອງກັບເນື້ອໃນຈິດໃຈຂອງກົດໝາຍ ແລະ ລະບຽບການ ລວມທັງແຈ້ງການສະບັບນີ້ ແມ່ນໃຫ້ລຶບລ້າງ ຫລື ແກ້ໄຂໃຫ້ຖືກຕ້ອງ ໂດຍດ່ວນ ອັນໃດບໍ່ແມ່ນສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນຂອງໂຮງງານ ຫລື ສິນຄ້າ ຂອງວິສາຫະກິດນຳເຂົ້າ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຫລື ຂໍອະນຸຍາດດຳເນີນທຸລະກິດ ໃຫ້ຖືກຕ້ອງຕ່າງຫາກ.

ຫ້າມບໍ່ໃຫ້ລະບຸຮູບແບບທຸລະກິດ ໂດຍແອບອ້າງຊື່ຕ່າງໆ ທີ່ບໍ່ແມ່ນສາຂາໃສ່ດ້ານຫລັງໃບທະບຽນວິສາຫະກິດ ເຊັ່ນ: ຮ້ານຂາຍຕໍ່, ຕົວແທນຈຳໜ່າຍ, ແຟຣນໄຈສ໌, ຮ້ານຈຳໜ່າຍສິນຄ້າທົ່ວໄປ, ສາຂາຈຳໜ່າຍ, ສາຂາໂຮງຮຽນ, ສາຂາໂຮງແຮມ, ສາຂາໂຮງໝໍ, ສາຂາເກັບຊື້, ສາຂາເກັບຊື້, ສາຂາປູກ, ສາຂາລ້ຽງ ແລະ ອື່ນໆ.

ໃນເວລາ ວິສາຫະກິດ ມາປ່ຽນແປງເນື້ອໃນທະບຽນວິສາຫະກິດ ແມ່ນໃຫ້ປະກອບເອກະສານຄືນໃໝ່ ໃຫ້ສອດຄ່ອງກັບແຈ້ງການສະບັບນີ້ທຸກປະການ ໃນກໍລະນີບໍ່ຖືກຕ້ອງ ຫລື ມີຂໍ້ສົງໄສໃຫ້ດຳເນີນການກວດກາ ປະຕິບັດມາດຕະການຢ່າງເຂັ້ມງວດ ແລະ ຫ້າມປ່ຽນແປງເນື້ອໃນທະບຽນວິສາຫະກິດກ່ຽວກັບເລື່ອງນີ້ ຢ່າງເດັດຂາດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ທ.ບານສະຕິ ເທບພະວົງ

ບ່ອນອີງ :

- ສະພາການຄ້າ ແລະ ອຸດສາຫະກຳ ;
- ພາກສວ່ຍສາ ແລະ ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ;
- ບັນດາກົມ, ຫ້ອງການ ແລະ ສະຖາບັນຂອງກະຊວງ ອຄ.



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

(ຊື່ວິສາຫະກິດແມ່).................. ເລກທີ......../.......

(Logo - ເຄື່ອງໝາຍວິສາຫະກິດ ຖ້າມີ) ທີ່.................ລົງວັນທີ................

**ຮຽນ** : ເຈົ້າໜ້າທີ່ທະບຽນວິສາຫະກິດ......................

**ເລື່ອງ**: ສະເໜີແຈ້ງລົງທະບຽນສ້າງຕັ້ງຮ້ານຈຳໜ່າຍ..............

- ອີງຕາມ ມາດຕາ 16 ແລະ ມາດຕາ 17 ຂອງຂໍ້ຕົກລົງ, ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ;
- ອີງຕາມແຈ້ງການ, ສະບັບເລກທີ 1293/ທອຄ,ກທຄວ, ລົງວັນທີ 27 ມິຖຸນາ 2019, ເລື່ອງ: ການສ້າງຕັ້ງສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າຂອງວິສາຫະກິດ.

ຂ້າພະເຈົ້າ (ຊື່ ແລະ ນາມສະກຸນ) ......................ໃນນາມ : ☐ ຜູ້ຈັດການ , ☐ ຜູ້ອຳນວຍການຂອງວິສາຫະກິດຊື່:..................... (ໃບທະບຽນວິສາຫະກິດ, ສະບັບເລກທີ......./...., ລົງວັນທີ...............) ຂໍສະເໜີແຈ້ງລົງທະບຽນສ້າງຕັ້ງຮ້ານຈຳໜ່າຍ: ☐ ຜະລິດຕະພັນຂອງໂຮງງານ ຫລື ☐ ສິນຄ້າທີ່ນຳເຂົ້າຂອງວິສາຫະກິດຂອງຕົນເອງ ເຊິ່ງລາຍລະອຽດດັ່ງລຸ່ມນີ້:

- ຊື່ຮ້ານຈຳໜ່າຍເປັນພາສາລາວ...........................................................................
- ຊື່ຮ້ານຈຳໜ່າຍເປັນພາສາສາກົນ (ຖ້າມີ)...........................................................................
- ທີ່ຕັ້ງຮ້ານຈຳໜ່າຍ, ຕັ້ງຢູ່ໜ່ວຍ...., ບ້ານ....., ເມືອງ...., ແຂວງ......., ໂທລະສັບ........;
- ທຶນຂອງຮ້ານຈຳໜ່າຍທີ່ວິສາຫະກິດມອບໃຫ້:......... ................ກີບ;
- ຄ່າເຊົ່າຮ້ານຈຳໜ່າຍ (ກໍລະນີເຊົ່າ):.................................ກີບ;
- ຫົວໜ້າຮ້ານຈຳໜ່າຍ: ຊື່ນາມສະກຸນ.......................ສັນຊາດ............................................
- ຜະລິດຕະພັນ ຫລື ສິນຄ້າ ທີ່ວິສາຫະກິດ ຂອງພວກຂ້າພະເຈົ້າ ມອບໝາຍໃຫ້ຈຳໜ່າຍ ແມ່ນສອດຄ່ອງກັບລາຍການ ທີ່ວິສາຫະກິດໄດ້ຮັບອະນຸຍາດ ຖືກຕ້ອງຕາມລະບຽບກົດໝາຍທຸກປະການ, ຊຶ່ງປະກອບດ້ວຍ: 1):..................; 2) ................................................

ຮ້ານຈຳໜ່າຍດັ່ງກ່າວ ແມ່ນຮ້ານຈຳໜ່າຍ ຂອງວິສາຫະກິດຂອງພວກຂ້າພະເຈົ້າຢ່າງແທ້ຈິງ ສ້າງ



Scanned with CamScanner

ຂື້ນຕາມຂໍ້ກຳນົດ ມາດຕາ 16 ແລະ ມາດຕາ 17 ຂອງຂໍ້ຕົກລົງ, ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, ໃນກໍລະນີບໍ່ມີຄວາມຈິງ ຫລື ເຄື່ອນໄຫວບໍ່ຖືກຕ້ອງ ຕາມລະບຽບກົດໝາຍຂ້າພະເຈົ້າຍິນ ດີຮັບຜິດຊອບຕໍ່ໜ້າກົດໝາຍທຸກປະການ.

ສະນັ້ນ,ຈິ່ງຮຽນມາຍັງທ່ານ ເພື່ອລົງທະບຽນ, ຄຸ້ມຄອງ, ຕິດຕາມ ແລະ ອອກໃບຢັ້ງຢືນການລົງທະບຽນກ່ຽວກັບການສ້າງຕັ້ງຮ້ານຈຳໜ່າຍໃຫ້ແກ່ວິສາຫະກິດຂອງພວກຂ້າພະເຈົ້າຕາມລະບຽບກົດໝາຍດ້ວຍ.ຯ

ລາຍເຊັນ ແລະ ປະທັບຕາ ຂອງວິສາຫະກິດແມ່

ໝາຍເຫດ:

1. ສຳເນົາໃບທະບຽນວິສາຫະກິດແມ່;
2. ສຳເນົາໃບອະນຸຍາດລົງທຶນ ແລະ/ຫລືໃບອະນຸຍາດດຳເນີນທຸລະກິດຂອງວິສາຫະກິດຈາກຂະແໜງການກ່ຽວຂ້ອງໃນກໍລະນີເປັນກິດຈະການຄວບຄຸມ ຫລື ກິດຈະການທີ່ຕ້ອງຂໍອະນຸຍາດ;
3. ບັນຊີພະນັກງານຂອງຮ້ານຈຳໜ່າຍ ເຊັນໂດຍຜູ້ອຳນວຍການ ຫລື ຜູ້ຈັດການຂອງວິສາຫະກິດ,ໃນນີ້ໃຫ້ລະບຸຊື່ ແລະນາມສະກຸນລະອຽດ;
4. ໃບຢັ້ງຢືນການລົງທະບຽນປະກັນສັງຄົມພະນັກງານຂອງຮ້ານຈຳໜ່າຍແຕ່ລະຄົນ;
5. ສັນຍາເຊົ່າຮ້ານຈຳໜ່າຍເຊັນໂດຍວິສາຫະກິດແມ່ (ກໍລະນີເຊົ່າ)
6. ສຳເນົາບັດປະຈຳຕົວ ຫຼື ປື້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ ໃນກໍລະນີເປັນຄົນຕ່າງປະເທດ ຂອງຫົວໜ້າສາຂາ;
7. ຮູບຂະໜາດ 3 X 4 ( ຂອງຫົວໜ້າສາຂາ );
8. ໃບມອບສັນທະ ຫຼື ໃບມອບສິດ ຂອງຜູ້ທີ່ຖືກມອບໝາຍໃຫ້ແຈ້ງລົງທະບຽນສາຂາໃນກໍລະນີຫົວໜ້າ ຫລືຄະນະສາຂາໄດ້ມາເອງ
9. ລາຍການເອກະສານປະກອບຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ຂອງ ຂໍ້ (ຂ),ຂອງແຈ້ງການສະບັບເລກທີ................ລົງວັນທີ........ ວ່າດ້ວຍການສ້າງຕັ້ງສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນ,ສິນຄ້າຂອງວິສາຫະກິດ.



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

(ຊື່ອົງກອນຮັບຜິດຊອບວຽກງານທະບຽນວິສາຫະກິດ)

ເຈົ້າໜ້າທີ່ທະບຽນວິສາຫະກິດ ເລກທີ............../ຈທວ....

| |
|---|
| ຮູບທົວໜ້າ<br>ຮ້ານຈຳໜ່າຍ<br>3x4 |

# ໃບຢັ້ງຢືນ

ການລົງທະບຽນສ້າງຕັ້ງຮ້ານຈຳໜ່າຍຜະລິດຕະພັນ ສິນຄ້າຂອງວິສາຫະກິດ

- ອີງຕາມ ມາດຕາ 16 ແລະ ມາດຕາ 17 ຂອງຂໍ້ຕົກລົງ, ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ;
- ອີງຕາມ ແຈ້ງການ, ສະບັບເລກທີ 1293/ທອຄ,ກທຄອ, ລົງວັນທີ 27 ມິຖຸນາ 2019, ເລື່ອງ: ການສ້າງຕັ້ງສາຂາ ຫລື ຮ້ານຈຳໜ່າຍຜະລິດຕະພັນ, ສິນຄ້າຂອງວິສາຫະກິດ ;
- ອີງຕາມ ໃບສະເໜີແຈ້ງລົງທະບຽນສ້າງຕັ້ງຮ້ານຈຳໜ່າຍ,ສະບັບເລກທີ...../......, ລົງວັນທີ.......

ເຈົ້າໜ້າທີ່ທະບຽນວິສາຫະກິດ (ຊື່ອົງກອນອອກໃບຢັ້ງຢືນ) ໄດ້ລົງທະບຽນສ້າງຕັ້ງຮ້ານຈຳໜ່າຍ ໃຫ້ແກ່ :

- ວິສາຫະກິດແມ່ (ຊື່...............), ໃບທະບຽນວິສາຫະກິດ, ເລກທີ....../....., ລົງວັນທີ...............
- ຮ້ານຈຳໜ່າຍ (ຊື່ເປັນພາສາລາວ)........................................................................
- ຮ້ານຈຳໜ່າຍ (ຊື່ເປັນພາສາສາກົນ - ຖ້າມີ)..............................................................
- ທີ່ຕັ້ງຮ້ານຈຳໜ່າຍຕັ້ງຢູ່ໜ່ວຍ...., ບ້ານ....., ເມືອງ...., ແຂວງ......., ໂທລະສັບ.......;
- ທຶນຂອງຮ້ານຈຳໜ່າຍທີ່ວິສາຫະກິດມອບໃຫ້:......... ................ກີບ;
- ຄ່າເຊົ່າຮ້ານຈຳໜ່າຍ (ກໍລະນີເຊົ່າ):.................................ກີບ;
- ຫົວໜ້າຮ້ານຈຳໜ່າຍ: ຊື່ນາມສະກຸນ........................ສັນຊາດ...........................................
- ຜະລິດຕະພັນ ຫລື ສິນຄ້າ ທີ່ວິສາຫະກິດ ຂອງພວກຂ້າພະເຈົ້າ ມອບໝາຍໃຫ້ຈຳໜ່າຍ ແມ່ນສອດຄ່ອງກັບລາຍການ ທີ່ວິສາຫະກິດໄດ້ຮັບອະນຸຍາດ ຖືກຕ້ອງຕາມລະບຽບກົດໝາຍທຸກປະການ, ຊຶ່ງປະກອບດ້ວຍ: 1):...................; 2) ................................................ ສ



Scanned with CamScanner

ສະນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ໄວ້ ເພື່ອເປັນຫຼັກຖານ ໃນການສ້າງຕັ້ງ ແລະ ການເຄື່ອນໄຫວຂອງ ຮ້ານຈຳໜ່າຍດັ່ງກ່າວ ຕາມໃບມອບສິດ ແລະ ຄວາມຮັບຜິດຊອບຂອງວິສາຫະກິດແມ່.ຯ

ທີ່.............., ວັນທີ..................

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

ໝາຍເຫດ: ແບບຟອມນີ້ ຄັດຕິດແຈ້ງການສະບັບເລກທີ...........ລົງວັນທີ.....................

ຄຳເຕືອນ: ຊື່ຮ້ານຈຳໜ່າຍຂອງວິສາຫະກິດຕ້ອງມີຊື່ຄຳວ່າ:
ຮ້ານຈຳໜ່າຍ ແລະ ຕາມດ້ວຍຊື່ຂອງວິສາຫະກິດແມ່ຕິດນຳທຸກຄັ້ງ.



Scanned with CamScanner